SCIENTIFIC NAME: *Quercus xanthotricha* A.Camus

ພື້ນບ້ານ: **Kor thang, kor nok** (Laos)
**ກໍ່ທາງ ກໍ່ນົກ** (Lao alphabetic)
**Sồi tày, sồi trụ, sồi biến, xoi cau, xen bien, mai kho** (Vietnam)

FAMILY: Fagaceae

**Joeri S. Strijk** *(Alliance for Conservation Tree Genomics ACTG)*
**Karina Orozco & Amy Byrne** *(The Morton Arboretum)*




ຕົວຢ່າງ (ແຫ້ງ). © *J.S. Strijk, www.asianfagaceae.com*

## ການກະຈາຍພັນ

**ຈີນ, ລາວ, ຫວຽດນາມ.**
ປ່າເຂດສູງ, ແຕ່ 1400–1500 ເມັດຈາກລະດັບໜ້ານໍ້າທະເລ.



## ສະຖານະພາບຄວາມສ່ຽງ

**EN** ໃກ້ຈະສູນພັນ (Endangered).

## ຄຳອະທິບາຍທາງດ້ານພືດສາດ

**ຕົ້ນໄມ້ໃຫຍ່**, ສູງແຕ່ 20–25 ເມັດ. **ກິ່ງງ່າອ່ອນ** ມີຂົນສີເຫຼືອງປົກຄຸມ, ບໍ່ດົນກໍຈະກ້ຽງ, ແລ້ວປ່ຽນເປັນສີມ້ວງເຂັ້ມ ມີຮອຍແຕກນ້ອຍໆ. **ຍອດ** ມີຂະໜາດນ້ອຍ, ຮູບໄຂ່ ຫຼື ມົນເລັກນ້ອຍ, ມີຂົນອ່ອນຍາວໜາແໜ້ນ, ມີເກັດຮູບໄຂ່, ປາຍຕັດ ຫຼື ມົນ.

**ໃບ** ຮູບຫອກ, ກົກໃບຮຽວແຫຼມ ຫຼື ມົນເລັກນ້ອຍ, ປາຍໃບຮຽວແຫຼມ ແລະ ຮູບຕັດຢູ່ດ້ານປາຍ, ຂະໜາດຄວາມຍາວແຕ່ 6–8 ຊັງຕີເມັດ ແລະ ກວ້າງ 2–2.6 ຊັງຕີເມັດ. ໃບອ່ອນຈະ ມີຂົນສີເຫຼືອງໜາປົກຄຸມ, ໜ້າໃບສີຂຽວ, ມັນເຫຼື້ອມ, ຫຼັງໃບ ຂາວ, ຍັງມີຂົນສີເຫຼືອງປົກຄຸມຈົນເຖິງກົກໃບ, ຂອບໃບດ້ານປາຍໃບຫຍັກແຂ້ວຕື້ນໆ. **ເສັ້ນກາງໃບ** ເບື້ອງໜ້າໃບເກືອບສັງເກດບໍ່ເຫັນ ແຕ່ຈະເຫັນຊັດເຈນດ້ານຫຼັງໃບ, ນູນຂຶ້ນ, ເປັນມູມ 35° ກັບເສັ້ນກາງໃບ. **ເສັ້ນໃບແຖວທີ 3** ບໍ່ສາມາດສັງເກດເຫັນໄດ້. **ກ້ານໃບ** ຮຽວ, ມີຄວາມຍາວແຕ່ 10–12 ມິນລິເມັດ, ຕອນທຳອິດມີຂົນ, ຕໍ່ມາຈະກ້ຽງ.



ອອກຈາກດ້ານເທິງ. ອອກຈາກພື້ນຜິວຕໍ່າ. (ຮູບທັງໝົດ:© *J.S. Strijk, www.asianfagaceae.com)*

**ກາບຫຸ້ມໝາກ (ຮູບຖ້ວຍ)** ຫຸ້ມ 1/3 ຂອງໝາກ, ມີລັກສະນະເປັນຊີງ ກະບອກ, ຂວັ້ນຮຽວແຫຼມເລັກນ້ອຍ, ມີເສັ້ນຜ່າສູນກາງແຕ່ 6–8 ມິນລີແມັດ ແລະ ຍາວ 4–5 ມິນລີແມັດ, ດ້ານໃນນຸ້ມ ແລະ ດ້ານນອກມີຂົນ, ດ້ານນອກມີ 5–6 ໂຊນທີ່ມີຮອຍຫຍັກ, ຮູບແຂ້ວ. **ໝາກ** ຮູບຮີ, ຍາວແຕ່ 8–9 ມິນລີແມັດ ແລະ ມີເສັ້ນຜ່າສູນກາງ 5 ມິນລີແມັດ, ມີຂົນສັ້ນອ່ອນນຸ້ມປົກຄຸມ, ປາຍຕິ່ງ ໂຄ້ງຮອບໂດຍວົງກົມ ແລະ ມີຮວງຮັບເກສອນໝາ 3 ອັນ, ເກິ່ງບໍ່ມີການ. **ຮອຍ**ນູນຂຶ້ນ, ຂະໜາດຂ້ອນຂ້າງໃຫຍ່. **ໃບລ້ຽງ** ໂດຍທົ່ວໄປເຊື່ອມຕິດກັນ.



ຈາກຊ້າຍຫາຂວາ: ໝາກແກ່; ໝາກແຫ້ງເປືອກແຂງແກ່; ໝາກແຫ້ງເປືອກແຂງ. © J.S. Strijk, www.asianfagaceae.com



ຖານຖ້ວຍ (ຕາກໃຫ້ແຫ້ງ). ພື້ນຜິວພາຍໃນຖ້ວຍ (ແຫ້ງ). ມຸມເບິ່ງດ້ານຂ້າງຂອງຈອກ (ແຫ້ງ). © J.S. Strijk, www.asianfagaceae.com

## ການນຳໃຊ້

ບໍ່ມີຂໍ້ມູນ.

## ຄຳແນະນຳໃນການເກັບໝາກ (ແກ່ນ) ສຳລັບກ້າແນວພັນໃນເຮືອນຫົ່ມ

ເມື່ອໝາກແກ່, ໃຫ້ເກັບແກ່ນໂດຍກົງຈາກຕົ້ນ ໂດຍການສັ່ນງ່າ ຫຼື ແມ້ນໂດຍໄມ້ສ້າວ. ເນື່ອງຈາກອັດຕາການຫງອກຂອງ ແກ່ນແມ່ນຈະຫຼຸດລົງໄວຫຼັງຈາກທີ່ຕົກລົງພື້ນດິນ ແລະ ມີຄວາມສ່ຽງທີ່ຈະຖືກທຳລາຍໂດຍສັດ ແລະ ແມງໄມ້ ດັ່ງນັ້ນຄວນເກັບ ໂດຍກົງຈາກຕົ້ນດີກວ່າເກັບຈາກພື້ນດິນ. ຖ້າແກ່ນບໍ່ມີຫຼາຍ, ກໍ່ສາມາດນຳເອົາຊໍ່ໝາກ ແລະ ແກ່ນທີ່ຕົກຕາມພື້ນດິນມາໃຊ້ຂະ ຫຍາຍພັນຢູ່ເຮືອນຫົ່ມໄດ້.

ບໍ່ຄວນປອກ ເປືອກໜາມ ຂອງໝາກ ແລະ ຊໍ່ໝາກ (ບໍ່ເອົາສ່ວນທີ່ ມີໜາມກາບຫຸ້ມໝາກ (ຮູບຖ້ວຍ) ອອກເພື່ອໃຫ້ເຫັນ ແກ່ນທາງໃນ). ການປອກເປືອກເພື່ອໃຫ້ເຫັນ ແກ່ນທາງໃນຈະເຮັດໃຫ້ ມີຄວາມສ່ຽງຕໍ່ການຖືກ ທຳລາຍຈາກແມງໄມ້ ແລະ ແຫ້ງໃນລະຫວ່າງ ການຂົນສົ່ງ, ແລະ ການເກັບຮັກສາ, ແລະ ເຮັດໃຫ້ການ ລະບຸ ຈັດຈຳແນກແນວ ພັນມີຄວາມຍຸ້ງຍາກ. ບໍ່ຄວນ "ປອກເປືອກ" ຊໍ່ໝາກເພື່ອແຍກໝາກອອກມາເປັນແຕ່ລະ ໝາກ. ກຸ່ມ ຂອງຕົ້ນ ກໍ່ຊະນິດນີ້, ຈະ ອອກໝາກໃກ້ໆກັນ ສາມາດເກັບຕົວຢ່າງ ແກ່ນແນວພັນເປັນ "ປະຊາກອນທ້ອງຖິ່ນ" ແລະ ສາມາດເກັບຮອບຮອມ ໃນຖົງ ອັນດຽວກັນໄດ້. ແກ່ນທີ່ເກັບຈາກຕົ້ນທີ່ຕ່າງ ກັນການ 100–150 ເມັດ ບໍ່ຄວນນຳມາປົນກັນ, ຕ້ອງແຍກເກັບໃນຖົງທີ່ຕ່າງ ກັນ. ຫາກມີຄວາມເປັນໄປໄດ້ຄວນ ເກັບກຳຂໍ້ມູນທາງດ້ານພູມສາດ ສຳລັບ "ປະຊາກອນທ້ອງຖິ່ນ" ແລະ ແຕ່ລະຖົງທີ່ເກັບ ຈາກປະຊາກອນເຫຼົ່ານັ້ນຈະ ຕ້ອງລະບຸຂໍ້ມູນລະອຽດເຊັ່ນດຽວກັນ. ການເກັບກິ່ງກ້ານນ້ອຍໆ ແລະ ໃບຈາກ ຕົ້ນທີ່ເກັບໝາກ ໃສ່ໃນຖົງທີ່ ເກັບຕົວຢ່າງນຳຍິ່ງເປັນການດີ ເພື່ອຊ່ວຍໃນການລະບຸຊະນິດ.

## ອອກດອກ-ໝາກ

**ອອກດອກ:**
ຂໍ້ມູນໜ້ອຍຫຼາຍ.

**ການຂະຫຍາຍພັນ:**
ໂດຍສັດກັດແທະ (ກະຫອກ, ໜູ, ໜູນ້ອຍ?).

**ຄວາມຕ້ອງການແສງ ຫຼື ຂໍ້ມູນທາງລະບົບນິເວດວິທະຍາ:**
ຍັງຕ້ອງສຶກສາຢັ້ງຢືນ.

ຂໍ້ຄວາມນີ້ເປັນຂອງຜູ້ຂຽນ. ການແຜ່ພັນບາງສ່ວນ ຫຼືທັງໝົດຂອງວຽກງານນີ້, ແລະການແປຂອງມັນຖືກຫ້າມໂດຍບໍ່ໄດ້ຮັບອະນຸຍາດຈາກສະຖາບັນການພິມເຜີຍແຜ່.

**ຂໍ້ມູນອອນລາຍ:**
https://www.asianfagaceae.com/quercus/Quercus_xanthotricha/